# ສຶກສາອັດຕາການຢູ່ລອດຂອງວິສາຫະກິດທີ່ນະຄອນຫຼວງວຽງຈັນຄຸ້ມຄອງ

# A Study on The Survival Rate of Enterprises that Managed by Vientiane Capital

ວາດສະໜາ ຈັນທະນະສິນ[1], ກ້ຽງຄຳ ຄຳວິລະວັນ[2], ທະນູໄຊ ວໍລະວົງ[3] ພັດສະລາ ສີຫາລາດ[4], ທິດາພອນ ອຸໄທຍະວົງ[5]

## ບົດຄັດຫຍໍ້

ການສຶກສາອັດຕາການຢູ່ລອດຂອງວິສາຫະກິດທີ່ນະຄອນຫຼວງວຽງຈັນຄຸ້ມຄອງ ໂດຍມີຈຸດປະສົງໃນການສຶກສາຄື: ສຶກສາປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດ. ວິທີໃນການສຶກສາດັ່ງກ່າວແມ່ນນຳໃຊ້ຂໍ້ມູນທຸຕິຍະພູມ ຫຼື ຂໍ້ມູນມືສອງ ທີ່ໄດ້ມາຈາກພະແນກສ່ວຍສາອາກອນນະຄອນຫຼວງຈຳນວນ 3586 ຕົວຢ່າງ, ພ້ອມທັງນຳໃຊ້ການວິເຄາະດ້ວຍເຕັກນິກຂອງ Survival Analysis ໂດຍນາໃຊ້ວິທີ Life Table ແລະ ນຳໃຊ້ຮູບແບບຈຳລອງໂລຈິດ (Logit Model) ເຂົ້າໃນການວິເຄາະດ້ວຍໂປຼແກຣມທາງສະຖິຕິ STATA13.

ຜົນການສຶກສາພົບວ່າ ປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດນັ້ນ ໄດ້ແກ່: ອາຍຸການດຳເນີນທຸລະກິດ, ທຶນຈົດທະບຽນວິສາຫະກິດ ແລະ ທຸລະກິດທີ່ເປັນຂະແໜງການຄ້າ.

**ຄຳສັບສຳຄັນ:** ອັດຕາຢູ່ລອດ, ຕາຕະລາງຊີວິດ, ວິສະຫະກິດ

[1] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, v.chanthanasinh@nuol.edu.la

[2] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, k.khamvilvanh@nuol.edu.la

[3] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, t.volavong@nuol.edu.la

[4] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, Sihalath1234@gmail.com

[5] ພາກວິຊາການຄ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, norngtdp@gmail.com

## Abstract

Studying the survival rate of enterprises managed by Vientiane City with the purpose of the study: study the factors that make enterprises in Vientiane managed by the tax department can be survival or non-survival. The method of this study is to use geographical data or secondary data obtained from the capital tax department in the amount of 3,586 samples, as well as to use the analysis with the technique of Survival Analysis using the Life Table method and to use the Logit Model in the analysis with the statistical program STATA13.

The results of a study of the factors that resulted in the enterprises in Vientiane Capital that the Tax Department manages to survive and not survive, includes 3 variables that have been significant as age of doing business, enterprise registered capital, and sector of trade.

**Keywords:** Survival Analysis, Life Table, enterprises

# I. ພາກສະເໜີ

**ຄວາມສຳຄັນຂອງບັນຫາ**

ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດໃຫຍ່ ແມ່ນມີຄວາມສຳຄັນໃນການຂະຫຍາຍຕົວຂອງຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ. ການເຕີບໂຕທາງດ້ານຂະແໜງການຄ້າ, ການບໍລິການ ແລະ ການຜະລິດທີ່ ສາມາດດຶງດູດນັກລົງທຶນ ແລະ ສ້າງຄວາມສົມດຸນໃນລະບົບເສດຖະກິດ, ສ້າງໂອກາດໃຫ້ມີວຽກເຮັດງານທຳ ໃຫ້ແກ່ສັງຄົມ. ພ້ອມນັ້ນ, ກໍມີຄວາມສຳຄັນໃນການພັດທະນາໃນລະດັບປະເທດ ແລະ ໃນລະດັບໂລກ. ສຳຫຼັບວິສາຫະກິດພາຍໃນ ສປປ ລາວ ປະກອບມີ: ທັງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດໃຫຍ່ເຊັ່ນດຽວກັນ ນັບວ່າເປັນທຸລະກິດທີ່ມີຄວາມສຳຄັນ ແລະ ຈຳເປັນຕໍ່ການພັດທະນາເສດຖະກິດໃຫ້ມີການເຕີບໃຫຍ່ຂະຫຍາຍຕົວ. ທັງເປັນການຂັບເຄື່ອນສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາປະເທດ, ປະກອບສ່ວນເຂົ້າໃນການສ້າງວຽກເຮັດງານທຳເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນ ແລະ ຫຼຸດຜ່ອນການວ່າງງານ, ພ້ອມທັງຍົກສູງ, ປັບປຸງຄຸນະພາບຊີວິດຂອງປະຊາຊົນໃຫ້ດີຂຶ້ນ ແລະ ກໍເປັນເງື່ອນໄຂໃນການສ້າງປັດໄຈພື້ນຖານໃຫ້ແກ່ການພັດທະນາອຸດສາຫະກຳທີ່ທັນສະໄໝ ແລະ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ.

ວິສາຫະກິດມີບົດບາດສຳຄັນໃນການຂະຫຍາຍກຳລັງການຜະລິດ ເປັນອົງປະກອບສຳຄັນຂອງການດຳເນີນທຸລະກິດ, ພ້ອມທັງເປັນຜູ່ສະໜອງປັດໄຈການຜະລິດເຊັ່ນ: ທຶນຮອນ, ທີ່ດິນ, ແຮງງານ ແລະ ເຕັກນິກ. ທັງເປັນຜູ່ຜະລິດ ແລະ ຈຳໜ່າຍຜະລິດຕະພັນສິນຄ້າ. ດັ່ງນັ້ນ, ການພັດທະນາວິສາຫະກິດໃນຕໍ່ໜ້າເປັນເປົ້າໝາຍ ແລະ ໜ້າທີ່ສຳຄັນໜຶ່ງຂອງແຜນການ 5 ປີຄັ້ງທີ VII ໂດຍສົ່ງເສີມໃຫ້ມີຫຼາຍຮູບແບບວິສາຫະກິດ, ເສດຖະກິດຄອບຄົວ, ຜູ່ປະກອບການທຸລະກິດຕ່າງໆປະກອບດ້ວຍວິສາຫະກິດເອກະຊົນຂະໜາດກາງ ແລະ ຂະໜາດນ້ອຍ, ວິສາຫະກິດປະສົມ ແລະ ວິສາຫະກິດເປັນລະບົບແບບບໍລິສັດ ໃຫ້ຂະຫຍາຍຕົວຢ່າງເສລີ ແລະ ຖືກກົດໝາຍ. ວິສາຫະກິດໄດ້ຖືກຊຸກຍູ້ປັບປຸງສົ່ງເສີມພັດທະນາປະສິດທິພາບໃຫ້ສູງຂຶ້ນ ເຊິ່ງໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມເຮັດໃຫ້ພື້ນຖານເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ

ຈາກການສັງລວມຫົວໜ່ວຍວິສາຫະກິດຂຶ້ນກັບພະແນກສ່ວຍສາອາກອນທີ່ນະຄອນຫຼວງຄຸ້ມຄອງໃນປີ 2015 ມີຈານວນວິສາຫະກິດທີ່ຈົດທະບຽນແລ້ວທັງໝົດແມ່ນ 3,586 ຫົວໜ່ວຍ ແລະ ໃນປີ 2019 ມີຈຳນວນວິສາຫະກິດທີ່ຈົດທະບຽນແລ້ວທັງໝົດແມ່ນ 5,968 ຫົວໜ່ວຍ ວິສາຫະກິດຂຶ້ນກັບນະຄອນຫຼວງຄຸ້ມຄອງຂອງປີ 2015 ແລະ ປີ 2019 ມີການເພີ່ມຂຶ້ນທັງໝົດ 2,382 ຫົວໜ່ວຍ. ໃນນັ້ນ, ຂະແໜງການຄ້າເພີ່ມຫຼາຍກ່ວາໝູ່ມີທັງໝົດ 1,241 ຫົວໜ່ວຍ ກວມເອົາ 52.09 ສ່ວນຮ້ອຍ, ຮອງລົງມາແມ່ນຂະແໜງການບໍລິການເພີ່ມຂຶ້ນທັງໝົດ 891 ຫົວໜ່ວຍ ກວມເອົາ 37.40 ສ່ວນຮ້ອຍ ແລະ ອັນດັບທີສຸດທ້າຍແມ່ນຂະແໜງການຜະລິດເພີ່ມຂຶ້ນທັງໝົດ 250 ຫົວໜ່ວຍ ກວມເອົາ 10.49 ສ່ວນຮ້ອຍ. ແຕ່ໃນຂະນະດຽວກັນກໍມີຫຼາຍໆວິສາຫະກິດທີ່ຖືກສະເໜີລົບລ້າງອອກຈາກຖານອາກອນທີ່ນະຄອນຫຼວງຄຸ້ມຄອງເນື່ອງຈາກວິສາຫະກິດອາດມີການຢຸດເຊົາ ຫຼື ມີການລົ້ມລະລາຍ ຫຼື ບໍ່ມີການຈ່າຍຄ່າອາກອນຕ່າງໆ.

ດ້ວຍເຫດນັ້ນ, ທີມງານຄົ້ນຄວ້າຈຶ່ງມີຄວາມສົນໃຈທີ່ຢາກຈະສຶກສາປັດໄຈໃດທີ່ສົ່ງຜົນເຮັດໃຫ້ທຸລະກິດໃດທີ່ສາມາດຢູ່ລອດ ແລະ ບໍ່ລອດ ໂດຍຍົກເອົາບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ຢູ່ພາຍໃນການຄຸ້ມຄອງຂອງພະແນກສວຍສາອາກອນນະຄອນຫຼວງວຽງຈັນ ມາເປັນກໍລະນີສຶກສາ. ເຊິ່ງມີຈຸດປະສົງໃນການສຶກສາດັ່ງຕໍ່ໄປນີ້:

- ສຶກສາປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດ.

ໃນການຄົ້ນຄວ້າຄັ້ງນີ້ແມ່ນໄດ້ເຈາະຈິງເອົາບັນດາຫົວໜ່ວຍທຸລະກິດທີ່ດຳເນີນວິສາຫະກິດໂດຍແມ່ນພະແນກສ່ວຍສາອາກອນນະຄອນຫຼວງຄຸ້ມຄອງ ໂດຍນຳໃຊ້ຂໍ້ມູນ ປີ 2015 ແລະ ປີ 2019 ມາໃຊ້ເປັນຖານຂໍ້ມູນໃນການວິເຄາະອັດຕາການຢູ່ລອດຂອງວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງ ໂດຍຈະເບິ່ງເຖິງຄຸນລັກສະນະຂອງວິສາຫະກິດໃນນະຄອນຫຼວງວຽງຈັນຄຸ້ມຄອງ ແລະ ປັດໄຈໃດທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນຄຸ້ມຄອງສາມາດຢູ່ລອດ ແລະ ບໍ່ລອດ.

## II. ທົບທວນທິດສະດີ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ

### 2.1 ທິດສະດີການວິເຄາະຄວາມຢູ່ລອດ

ໃນປະຈຸບັນເຊິ່ງເປັນຍຸກໂລກາພິວັດທີ່ມີການຄົ້ນຄວ້າທົດລອງໂດຍບໍ່ມີວັນສິ້ນສຸດ ແລະ ມີນັກວິໄຈຈຳນວນຫຼາຍທີ່ຕ້ອງການຮູ້ວ່ານັບຕັ້ງແຕ່ເລີ່ມເກີດເຫດການຕ່າງໆທີ່ຕ້ອງການສຶກສາໄປຈົນເຖິງການສິ້ນສຸດເຫດການນັ້ນໆວ່າ ໂອກາດໃນການຢູ່ລອດ ຫຼື ປະສົບຜົນສຳເລັດ ແລະ ໂອກາດທີ່ຈະລົ້ມເຫຼວຈະເປັນເທົ່າໃດຍົກຕົວຢ່າງເຊັ່ນ:ນັບຕັ້ງແຕ່ເກີດວິກິດໃນເສດຖະກິດຈົນເຖິງການສິ້ນສຸດເຫດການ ໂອກາດທີ່ບໍລິສັດຈະຢູ່ລອດມີເທົ່າໃດ ເຊິ່ງສະຖິຕິທີ່ໃຊ້ໃນການວິເຄາະໂອກາດການຢູ່ລອດດັ່ງກ່າວເອີ້ນວ່າ: “ການວິເຄາະຄວາມຢູ່ລອດ (Survival Analysis)”. ເຊິ່ງການວິເຄາະໂອກາດການຢູ່ລອດມີວິທີການສຶກສາ 2 ລັກສະນະໃຫຍ່ໆຄື:

- ວິທີແບບຕາຕະລາງຊີບ (Life Table) ແບ່ງອອກເປັນ 2 ວິທີໄດ້ແກ່: ວິທີການຕາຕະລາງຊີບ (Life Table) ແລະ ວິທີການຂອງ Kaplan-Meier Method.

- ວິທີແບບ Multivariate Analysis ທີ່ໃຊ້ COX Regression ເປັນການວິເຄາະຄວາມຢູ່ລອດທີ່ມີຕົວປ່ຽນຜົນຮ່ວມ (Covariate) ເຊິ່ງແບ່ງອອກເປັນ 2 ແບບໄດ້ແກ່: ຕົວປ່ຽນຈຳແນກກຸ່ມ (Strata Variable) ແລະ ຕົວປ່ຽນທີ່ປ່ຽນແປງໄດ້ຕາມເວລາ (Time-Dependent Covariate) ແລະ ໃນການສຶກສາຄັ້ງນີ້ ທີມງານຜູ້ສຶກສາໄດ້ເລືອກເອົາວິທີການວິເຄາະແບບຕາຕະລາງຊີບ ຕາມວິທີຕາຕະລາງຊີບ (Life Table).

- ວິທີການຕາຕະລາງຊີບ (Life Table)

ຖະນັດ ວົງສາຍເຊື້ອ (2017) Survival Analysis ທີ່ເປັນຕາຕະລາງຊີບ (Life Table) ມີວັດຖຸປະສົງເພື່ອຢາກຮູ້ວ່າໄລຍະເວລາດົນປານໃດທີ່ປະຊາກອນມີຊີວິດຢູ່ ໂດຍຈະເປັນລັກສະນະຂອງການຄຳນວນຄ່າເລ່ຍໃນກຸ່ມຊ່ວງໄລຍະເວລາເປັນຊັ້ນປີ ຫຼື ຊັ້ນເດືອນ. ເປັນການນຳຂໍ້ມູນໄຂວ່ (Cross Sectional) ປັບເປັນຂໍ້ມູນໄລຍະຍາວ (Longitudinal data) ແລະ ຂໍ້ມູນທີ່ຈຳເປັນໃຊ້ຈະຕ້ອງປະກອບມີ 2 ຕົວປ່ຽນຄື: ຕົວປ່ຽນເວລາ (Time) ແລະ ຕົວປ່ຽນສະຖານະ (Status).

• ຕົວປ່ຽນເວລາ (Time): ໝາຍເຖິງ Duration ໂດຍຈະນັບຕັ້ງແຕ່ຊ່ວງເວລາຂອງການເລີ່ມຕົ້ນເຫດການ ຈົນໄປເຖິງການສິ້ນສຸດເຫດການທີ່ມີການກວດສອບ ໂດຍຈະເປັນຊ່ວງເວລາທີ່ເຮົາກຳນົດ.

• ຕົວປ່ຽນສະຖານະ (Status): ໝາຍເຖິງຕົວປ່ຽນທີ່ກຳນົດຕົວຢ່າງທີ່ກວດສອບໃນຊ່ວງເວລາທີ່ກຳນົດວ່າມີສະຖານະໃດເຊັ່ນ: ລອດ ຫຼື ຕາຍຈະກຳນົດໃຫ້ 1=ລອດ ແລະ 0=ຕາຍ.

ຂໍ້ມູນທີ່ໃຊ້ໃນການວິເຄາະດ້ວຍວິທີຕາຕະລາງຊີບ ຫຼື Life Table ຈະປະກອບມີດັ່ງນີ້:



ແຫຼ່ງຂໍ້ມູນ: ຖະນັດ ວົງສາຍເຊື້ອ (2017)

### 2.2 ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ

ອີງໃສ່ບົດການວິໄຈ ແລະ ບົດການຄົ້ນຄວ້າຂອງຕ່າງປະເທດຫຼາຍທ່ານໄດ້ໃຫ້ເຫດຜົນວ່າການທີ່ທຸລະກິດໃດໜຶ່ງທີ່ສາມາດຢູ່ລອດ ແລະ ບໍ່ລອດແມ່ນຂຶ້ນກັບປັດໄຈຕ່າງໆທີ່ແຕກຕ່າງກັນ ເຊິ່ງໃນບົດວິໄຈຂອງ (Giorgia Giovannetti et al. 2008) ໄດ້ກ່າວວ່າ: ດ້ານຂະໜາດຂອງທຸລະກິດແມ່ນມີຜົນໃນການຢູ່ລອດ ເນື່ອງຈາກວ່າ: ຖ້າທຸລະກິດມີຂະໜາດໃຫຍ່ແມ່ນຈະມີຜົນຕໍ່ກັບການຢູ່ລອດສູງ ແລະ (Silviano et al. 2004) ກໍ່ໄດ້ກ່າວເຊັ່ນກັນວ່າ: ການຢູ່ລອດຂອງທຸລະກິດຂະໜາດໃຫຍ່ແມ່ນສູງກວ່າທຸລະກິດຂະໜາດນ້ອຍ ເນື່ອງຈາກວ່າ: ຄວາມເປັນໄປໄດ້ໃນການລົ້ມເຫຼວຂອງທຸລະກິດຂະໜາດໃຫຍ່ແມ່ນຕໍ່າກວ່າ 42.5 ສ່ວນຮ້ອຍຂອງທຸລະກິດຂະໜາດນ້ອຍ. ສ່ວນບົດວິໄຈຂອງ (Hakan DEMĠRGĠL et al. 2010), (Jia liu and Dong pang 2003) ໄດ້ກ່າວວ່າ: ອາຍຸໃນການດໍາເນີນງານກໍ່ເປັນປັດໄຈໜຶ່ງທີ່ຊ່ວຍໃນການຢູ່ລອດຂອງທຸລະກິດ ເນື່ອງຈາກວ່າ: ອາຍຸຂອງທຸລະກິດບົ່ງບອກເຖິງປະສົບການ ແລະ ຖານລູກຄ້າໄດ້.

## III. ວິທີການສຶກສາ

### 3.1 ວິທີການສຶກສາ ແລະ ຄົ້ນຄວ້າ

ວິທີການສຶກສາແບບພັນລະນາ: ແມ່ນວິທີທີ່ນໍາໃຊ້ເຂົ້າໃນການອະທິບາຍກ່ຽວກັບສະພາບລວມຂອງວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງ ແລະ ຄຸນລັກສະນະທົ່ວໄປຂອງວິສາຫະກິດທີ່ສາມາດຢູ່ລອດ ແລະ ບໍ່ລອດ ໂດຍເອົາຂໍ້ມູນເຫຼົ່ານີ້ມາຄໍານວນຫາຄ່າຄວາມຖີ່, ຄ່າສະເລ່ຍ ແລະ ຄ່າສ່ວນຮ້ອຍ ໂດຍການໃຊ້ຕາຕະລາງ ໂດຍການປຽບທຽບຂອງວິສາຫະກິດໃດສາມາດຢູ່ລອດ ຫຼື ບໍ່ລອດເພື່ອອະທິບາຍໄດ້ຜົນຂອງການສຶກສາ.

ວິທີການສຶກສາແບບປະລິມານ: ແມ່ນວິທີທີ່ນໍາໃຊ້ເຂົ້າໃນການສຶກສາ ເພື່ອຄາດປະມານປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງຄຸ້ມຄອງຢູ່ລອດ ແລະ ບໍ່ລອດ, ໂດຍການນໍາໃຊ້ການວິເຄາະແບບ Survival Analysis ໂດຍໃຊ້ໂປຼແກຣມ Microsoft Excel ເພື່ອຈັບຄູ່ຕາມເລກລະຫັດອາກອນຂອງວິສາຫະກິດຈາກປີ 2015 ແລະ ປີ 2019 ເພື່ອຊອກຫາວ່າວິສາຫະກິດໃດ ສາມາດຢູ່ລອດ ແລະ ບໍ່ລອດ. ນອກຈາກນີ້, ຍັງນໍາໃຊ້ແບບຈໍາລອງ (Logit Model) ໂດຍໂປຼແກຣມ STATA.13 ເພື່ອກວດສອບເບິ່ງວ່າມີປັດໄຈໃດທີ່ທີ່ເປັນຕົວກໍານົດຄວາມຢູ່ລອດ ແລະ ບໍ່ຢູ່ລອດຂອງວິສະຫະກິດ.

### 3.2 ການເກັບຮອບຮອມຂໍ້ມູນ

ໃນການສຶກສາຄັ້ງນີ້ແມ່ນຈະໃຊ້ພຽງຂໍ້ມູນທຸຕິຍະພູມ ຫຼື ຂໍ້ມູນມີສອງ ເຊິ່ງປະກອບມີ 2 ພາກສ່ວນຄື: ຂໍ້ມູນຂ່າວສານ (Information) ເປັນຕົ້ນແມ່ນຕາລາ, ບົດຄວາມ, ທິດສະດີ ຫຼື ຫຼັກການການຂຽນບົດຄົ້ນຄວ້າ ຈາກງານວິໄຈອື່ນໆ ແລະ ຂໍ້ມູນ (Data) ແມ່ນຂໍ້ມູນສະຖິຕິການມອບພັນທະອາກອນຂອງວິສາຫະກິດທີ່ຈົດທະບຽນໃນນະຄອນຫຼວງທີ່ພະແນກສ່ວຍສາອາກອນຄຸ້ມຄອງສະເພາະແຕ່ປີ 2015 ແລະ ປີ 2019 ເປັນປຶ້ມສະຫຼຸບສະຖິຕິປະຈໍາປີ ແລະ ຂໍ້ມູນສະຖິຕິທີ່ເປັນ File.

### 3.3 ວິທີການວິເຄາະຂໍ້ມູນ

#### 3.3.1 ຂັ້ນຕອນໃນການສັງລວມຂໍ້ມູນ.

ຂັ້ນຕອນທໍາອິດແມ່ນການໄຈ້ແຍກຂໍ້ມູນກັບພະແນກສ່ວຍສາອາກອນນະຄອນຫຼວງ ໂດຍຂໍ້ມູນທີ່ເຮົາໄດ້ມາແມ່ນສະຖິຕິຂອງວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງ ເຊິ່ງວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງແມ່ນມີການເສຍອາກອນແຕ່ລະປີ ຂໍ້ມູນທີ່ໄດ້ມາແມ່ນສະຖິຕິຂອງວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງປີ 2015 ແລະ ປີ 2019 ໂດຍການສະຖິຕິຂອງວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງປີ 2015 ເປັນປີຖານ ແລະ ວິສາຫະກິດທີ່ນະຄອນຫຼວງຄຸ້ມຄອງ ປີ 2019 ເປັນປີປະຈຸບັນ ເຊິ່ງອາໄສເລກລະຫັດອາກອນຂອງວິສາຫະກິດມາຈັບຄູ່ເພື່ອເບິ່ງວ່າວິສາຫະກິດໃດທີ່ນະຄອນຫຼວງຄຸ້ມຄອງສາມາດຢູ່ລອດ ແລະ ບໍ່ລອດ.

#### 3.3.2 ການສ້າງແບບຈາລອງ.

ການຄາດປະມານປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງຄຸ້ມຄອງຢູ່ລອດ ແລະ ບໍ່ລອດ , ໂດຍການນາໃຊ້ການວິເຄາະແບບ Survival Analysis ໂດຍໃຊ້ໂປຼແກຣມ Microsoft Excel ເພື່ອຈັບຄູ່ຕາມເລກລະຫັດອາກອນຂອງວິສາຫະກິດຈາກປີ 2015 ແລະ ປີ 2019 ເພື່ອຊອກຫາວ່າວິສາຫະກິດໃດສາມາດຢູ່ລອດ ແລະ ບໍ່ລອດ ແລະ ນໍາໃຊ້ແບບຈໍາລອງ (Logit Model) ໂດຍໂປຼແກຣມ STATA.13 ເພື່ອກວດສອບເບິ່ງວ່າມີປັດໄຈໃດທີ່ທີ່ເປັນຕົວກໍານົດຄວາມຢູ່ລອດ ແລະ ບໍ່ຢູ່ລອດຂອງວິສະຫະກິດ. ທີມງານການຄົ້ນຄວ້າໄດ້ກໍານົດຕົວປ່ຽນໄດ້ທັງໝົດ 9 ຕົວປ່ຽນເພື່ອສົມຜົນໃນການວິເຄາະຄື: ຕົວປ່ຽນຕາມ 1 ຕົວໝາຍເຖິງວິສາຫະກິດໃນນະຄອນຫຼວງວຽງຈັນຄຸ້ມຄອງຢູ່ລອດ ແລະ ບໍ່ລອດ ແລະ ຕົວປ່ຽນອິດສະຫຼະຈໍານວນ 8 ຕົວປ່ຽນເຊິ່ງປະກອບມີ: ເພດຂອງຜູ່ປະກອບການ (Gender), ສະຖານທີ່ຕັ້ງຂອງທຸລະກິດ (Location), ອາຍຸການດາເນີນທຸລະກິດ (life), ທຶນຈົດທະບຽນວິສາຫະກິດ (Enterprise Registered Capital), ລັກສະນະຂອງທຸລະກິດທີ່ມີຜູ່ປະກອບການຖືທຶນພາຍໃນ 100% (Domestic) ແລະ ລັກສະນະຂອງທຸລະກິດທີ່ມີການຮ່ວມທຶນ (cooperation), ຂະແໜງການຄ້າ (Sector of trade), ຂະແໜງການບໍລິການ (Sector of Service). ສະນັ້ນ, ທີມງານຄົ້ນຄວ້າຈິ່ງໄດ້ມີການປັບໃຊ້ຈາກຫຼາຍບົດວິໄຈທີ່ກ່ຽວຂ້ອງ ແລະ ແບບຈໍາລອງໃນການສຶກສາສາມາດຂຽນເປັນຕໍາລາການພົວພັນໄດ້ດັ່ງລຸ່ມນີ້:

ສົມຜົນທາງຄະນິດສາດ:

$$survival = f(gender, location, life, lncap, bus_trade, bus_service, cha_domestic, cha_co)$$

ສົມຜົນທາງສະຖິຕິ:

$$Survival = \beta_0 + \beta_1(gender) + \beta_2(location) + \beta_3(life) + \beta_4 ln(cap) + \beta_5(bus_trade) + \beta_6(bus_service) + \beta_7(cha_domestic) + \beta_8(cha_co) + \mu$$

ຕາຕະລາງ 1: ສະແດງເຖິງຄວາມໝາຍຂອງຕົວປ່ຽນຕາມ ແລະ ຕົວປ່ຽນອິດສະຫຼະ.

| ຕົວປ່ຽນ | ຄວາມໝາຍ | ຫົວໜ່ວຍ |
|---|---|---|
| ຕົວປ່ຽນຕາມ (Dependent Variable) | | |
| Survival | ທຸລະກິດທີ່ນະຄອນຫຼວງວຽງຈັນຄຸ້ມຄອງຢູ່ລອດ ຫຼື ບໍ່ລອດ | 1 = ລອດ, 0 = ບໍ່ລອດ |
| ຕົວປ່ຽນອິດສະຫຼະ (Independent Variable) | | |
| gender | ເພດຂອງຜູ້ປະກອບການ | 1 = ເພດຊາຍ, 0 = ເພດຍິງ |
| location | ສະຖານທີ່ຕັ້ງຂອງທຸລະກິດ | 1 = 4 ເມືອງໃນ, 0 = 5 ເມືອງນອກ |
| life | ອາຍຸການດໍາເນີນທຸລະກິດ | 1 = ດໍາເນີນທຸລະກິດ □ 10 ປີ<br>0 = ດໍາເນີນທຸລະກິດ □ 10 ປີ |
| ln(cap) | ທຶນຈົດທະບຽນວິສາຫະກິດ | ກີບ |
| Bus_trade | ຂະແໜງການຄ້າ | 1 = ຂະແໜງການຄ້າ, 0 = ອື່ນໆ. |
| Bus_service | ຂະແໜງການບໍລິການ | 1 = ຂະແໜງການບໍລິການ, 0 = ອື່ນໆ |
| Cha_domestic | ລັກສະນະຂອງທຸລະກິດທີ່ ມີຜູ້ປະກອບການຖືທຶນພາຍໃນ 100% | 1 = ພາຍໃນ100%, 0 = ອື່ນໆ |
| Cha_co | ລັກສະນະຂອງທຸລະກິດທີ່ມີການຮ່ວມທຶນ | 1 =ຮ່ວມທຶນ, 0 = ອື່ນໆ |
| $\beta_0$ | ແມ່ນຄ່າຄົງທີ່ | |
| $\beta_0,\ldots\ldots,\beta_8$ | ແມ່ນຄ່າສໍາປະສິດຂອງຕົວປ່ຽນອິດສະຫຼະທີ່ຕ້ອງການສຶກສາ | |
| $\mu$ | ຕົວຄາດເຄື່ອນຂອງສົມຜົນ | |

ແຫຼ່ງຂໍ້ມູນ: ທີມງານຄົ້ນຄວ້າ, 2022

## IV. ຜົນການສຶກສາ

ໃນການສຶກສາອັດຕາການຢູ່ລອດຂອງວິສາຫະກິດທີ່ນະຄອນຫຼວງວຽງຈັນຄຸ້ມຄອງເຫັນໄດ້ວ່າ ສະພາບລວມຂອງວິສາຫະກິດໃນນະຄອນຫຼວງທີ່ພະແນກສ່ວຍສາອາກອນຄຸ້ມຄອງ ທ່າອ່ຽງເພີ່ມຂຶ້ນເລື້ອຍໆ. ຕາຕະລາງທີ 2: ຈານວນພື້ນຖານວິສາຫະກິດທັງໝົດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງແຕ່ປີ 2015 - 2019.

| ປີ | ຈໍານວນວິສະຫະກິດລວມ (ຫົວໜ່ວຍ) | | | | ສັດສ່ວນທຽບໃສ່ຈໍານວນທັງໝົດ (ສ່ວນຮ້ອຍ) | | | |
|---|---|---|---|---|---|---|---|---|
| | ລົບລ້າງ/ຢຸດເຊົາ | ເກີດໃໝ່ | ສືບຕໍ່ | ລວມ | ລົບລ້າງ/ຢຸດເຊົາ | ເກີດໃໝ່ | ສືບຕໍ່ | ລວມ |
| 2015 | 1,718 | 543 | 3,043 | 5,304 | 32.39 | 10.23 | 57.37 | 100 |

| | | | | | | | | |
|---|---|---|---|---|---|---|---|---|
| 2016 | 2,769 | 643 | 2,535 | 5,947 | 52.20 | 10.81 | 42.62 | 100 |
| 2017 | 2,650 | 441 | 3,297 | 6,388 | 49.96 | 6.90 | 51.61 | 100 |
| 2018 | 2,941 | 656 | 3,447 | 7,044 | 55.44 | 9.31 | 48.93 | 100 |
| 2019 | 2,909 | 1,833 | 4,135 | 8,877 | 54.84 | 20.64 | 46.58 | 100 |

ແຫຼ່ງຂໍ້ມູນ: ພະແນກສ່ວຍສາອາກອນນະຄອນຫຼວງວຽງຈັນ, 2020

ຈາກຕາຕະລາງທີ 2 ເຫັນວ່າ ຈຳນວນຫົວໜ່ວຍທຸລະກິດລວມແມ່ນເພີ່ມຂຶ້ນ ຫຼາຍກວ່າ 55 ສ່ວນຮ້ອຍ ຈາກປີ 2015 ຫາ 2019 ແລະ ໃນນັ້ນ, ຍັງສັງເກດເຫັນວ່າ ຈຳນວນຫົວໜ່ວຍທຸລະກິດທີ່ຖືກລົບລ້າງ ຫຼື ຢຸດເຊົາ ກໍ່ມີຕົວເລກເພີ່ມຂຶ້ນເຊັ່ນດຽວກັນ. ໃນປີ 2015 ມີຈຳນວນ 1,718 ຫົວໜ່ວຍ ເຊິ່ງກວດມເອົາ 32.39 ສ່ວນຮ້ອຍ ເພີ່ມຂຶ້ນມາເປັນ 2,941 ຫົວໜ່ວຍໃນປີ 2018 ແລະ 2,909 ຫົວໜ່ວຍໃນປີ 2019 ກວມເອົາຫຼາຍກວ່າ 50 ສ່ວນຮ້ອຍໃນປີດັ່ງກ່າວ.

ທຸລະກິດ/ວິສາຫະກິດທີ່ລອດສ່ວນຫຼາຍແມ່ນຜູ່ປະກອບການທີ່ເປັນເພດຊາຍທັງໝົດ 1,696 ຫົວໜ່ວຍ ຫຼື 74.38 ສ່ວນຮ້ອຍ ສາເຫດເນື່ອງຈາກວ່າຜູ້ປະກອບການສ່ວນຫຼາຍເປັນຫົວໜ້າຄອບຄົວຈຶ່ງເຮັດໃຫ້ຈຳນວນ ແລະ ອັດຕາສ່ວນຂອງຜູ້ປະກອບການເພດຊາຍສູງກວ່າເພດຍິງ, ສະຖານທີ່ຕັ້ງໃນການດຳເນີນທຸລະກິດທີ່ລອດສ່ວນຫຼາຍແມ່ນຕັ້ງຢູ່ 4 ເມືອງໃນທັງໝົດ 1,792 ຫົວໜ່ວຍ ຫຼື 49.97 ສ່ວນຮ້ອຍ ສາເຫດຈາກມີທຳເລທີ່ຕັ້ງດີ, ມີປະຊາກອນອາໄສຢູ່ຢ່າງໜາແໜ້ນ, ມີຈຸດສູນລວມການຄ້າການບໍລິການ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ. ອາຍຸໃນການດຳເນີນທຸລະກິດສ່ວນຫຼາຍທີ່ຈະລອດແມ່ນມີການດຳເນີນງານໜ້ອຍກວ່າ 10 ປີທັງໝົດ 1,861 ຫົວໜ່ວຍ ຫຼື 51.90 ສ່ວນຮ້ອຍ ເນື່ອງຈາກເປັນວິສາຫະກິດໃໝ່ ແລະ ຢູ່ໃນຍຸກທີ່ເຕັກໂນໂລຊີກຳລັງມີການພັດທະນາ ແລະ ທັນສະໄໝຫຼາຍຂຶ້ນ ເຊິ່ງເຮັດໃຫ້ຜູ້ບໍລິໂພກຫັນມາໃຫ້ຄວາມສົນໃຈໃນຄວາມສະດວກສະບາຍ, ແປກໃໝ່ ແລະ ທັນສະໄໝ, ສ່ວນຫຼາຍທຸລະກິດທີ່ລອດແມ່ນລັກສະນະການລົງທຶນຂອງທຸລະກິດແບບຜູ່ປະກອບການຖືທຶນພາຍໃນ 100 ສ່ວນຮ້ອຍທັງໝົດ 1,595 ຫົວໜ່ວຍ ຫຼື 44.48 ສ່ວນຮ້ອຍ ເນື່ອງຈາກແຫຼ່ງເງິນທຶນພາຍໃນມີຕົ້ນທຶນທາງການເງິນຕ່ຳ, ການປະກອບເອກະສານບໍ່ມີຫຼາຍຂັ້ນຕອນ ຜູ່ປະກອບການສາມາດຄວບຄຸມແຫຼ່ງເງິນທຶນພາຍໃນໄດ້, ບໍ່ມີຄວາມຫຍຸ້ງຍາກແບບແຫຼ່ງເງິນທຶນພາຍນອກເຮັດໃຫ້ຜູ່ປະກອບການສາມາດນຳເງິນມາລົງທຶນຕໍ່ຍອດ ແລະ ສ້າງກຳໄລໃຫ້ແກ່ກິດຈະການ. ສ່ວນຫຼາຍຂະແໜງການທຸລະກິດແມ່ນຂະແໜງການບໍລິການທີ່ລອດສູງທັງໝົດ 1,308 ຫົວໜ່ວຍ ຫຼື 36.48 ສ່ວນຮ້ອຍ ສາເຫດທີ່ວິສາຫະກິດຂະແໜງການບໍລິການມີອັດຕາການຢູ່ລອດສູງທີ່ສຸດ ເນື່ອງຈາກວ່າ ລັດຖະບານມີນະໂຍບາຍສົ່ງເສີມການລົງທຶນຈາກຕ່າງປະເທດ, ມີການພັດທະນາລະບົບການຄົມມະນາຄົມການຂົນສົ່ງ ແລະ ປັບປຸງໂຄງລ່າງພື້ນຖານໃຫ້ດີຂຶ້ນເຮັດໃຫ້ຊາວຕ່າງຊາດເຂົ້າມາລົງທຶນໃນປະເທດລາວເປັນຈຳນວນຫຼາຍ ແລະ ການປະກອບທຸລະກິດ/ວິສາຫະກິດທີ່ມີທຶນຈົດທະບຽນຫຼາຍກວ່າ 4 ຕື້ກີບແມ່ນສາມາດຢູ່ລອດໄດ້ສູງກວ່າທັງໝົດ 941 ຫົວໜ່ວຍ ຫຼື 26.24 ສ່ວນຮ້ອຍ ສາເຫດທີ່ວິສາຫະກິດທີ່ມີທຶນຈົດທະບຽນຫຼາຍກວ່າ 4 ຕື້ກີບ ມີອັດຕາການຢູ່ລອດສູງທີ່ສຸດ ເນື່ອງມາຈາກເປັນວິສາຫະກິດຂະໜາດໃຫຍ່ມີຄວາມໝັ້ນຄົງ, ມີການຈັດການ ແລະ ການປ້ອງກັນຄວາມສ່ຽງໄດ້ດີເຮັດໃຫ້ມີຄວາມໜ້າເຊື່ອໃຫ້ແກ່ນັກລົງທຶນ.

ຜົນໄດ້ຮັບຈາກການວິເຄາະແບບຈຳລອງ Logit Model ເພື່ອຫາປັດໄຈທີ່ສົ່ງຜົນເຮັດໃຫ້ ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດເຫັນໄດ້ວ່າ: ຕົວປ່ຽນທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດ

ຜ່ານການທົດສອບມີພຽງ 3 ປັດໄຈຄື: ອາຍຸການດາເນີນທຸລະກິດ (life) ຖ້າຫົວໜ່ວຍທຸລະກິດ/ວິສາຫະກິດ ຫາກມີອາຍຸໃນການດໍາເນີນທຸລະກິດມາຫຼາຍກວ່າ 10 ປີ (2015) ຈະເຮັດໃຫ້ໂອກາດທີ່ຫົວໜ່ວຍທຸລະກິດ/ວິສາຫະກິດດັ່ງກ່າວຢູ່ລອດເພີ່ມຂຶ້ນເທົ່າກັບ 0.1033 ຫຼື 10.33 ສ່ວນຮ້ອຍ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິເທົ່າກັບ 99 ສ່ວນຮ້ອຍ, ທຶນຈົດທະບຽນວິສາຫະກິດ (lncap) ຖ້າຫົວໜ່ວຍທຸລະກິດ/ວິສາຫະກິດມີທຶນຈົດທະບຽນໃນການດໍາເນີນທຸລະກິດເພີ່ມຂຶ້ນ 1 ສ່ວນຮ້ອຍ ຈະສົ່ງຜົນເຮັດໃຫ້ໂອກາດການຢູ່ລອດທີ່ຫົວໜ່ວຍທຸລະກິດ/ວິສາຫະກິດດັ່ງກ່າວຢູ່ລອດເພີ່ມຂຶ້ນເທົ່າກັບ 0.0705 ຫຼື 7.05 ສ່ວນຮ້ອຍ ດ້ວຍລະດັບຄວາມເຊື່ອ ໝັ້ນທາງສະຖິຕິເທົ່າກັບ 99 ສ່ວນຮ້ອຍ ແລະ ຂະແໜງການຄ້າ (bus_trade) ຖ້າຫົວໜ່ວຍທຸລະກິດ/ວິສາຫະກິດທີ່ເປັນຂະແໜງການຄ້າເພີ່ມຂຶ້ນ 1 ຫົວໜ່ວຍ ຈະສົ່ງຜົນເຮັດໃຫ້ໂອກາດການຢູ່ລອດທີ່ຫົວໜ່ວຍທຸລະກິດ/ວິສາຫະກິດດັ່ງກ່າວຢູ່ລອດເພີ່ມຂຶ້ນເທົ່າກັບ 0.0536 ຫຼື 5.36 ສ່ວນຮ້ອຍ ດ້ວຍລະດັບຄວາມເຊື່ອໝັ້ນທາງສະຖິຕິເທົ່າກັບ 90 ສ່ວນຮ້ອຍ ແລະ ຕົວປ່ຽນທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດ ບໍ່ຜ່ານການທົດສອບທັງໝົດ 5 ປັດໄຈຄື: ເພດຂອງຜູ້ປະກອບການ (gender), ສະຖານທີ່ຕັ້ງໃນການດາເນີນທຸລະກິດ (location), ລັກສະນະການລົງທຶນທີ່ຜູ້ປະກອບການຖືທຶນພາຍໃນ 100 ສ່ວນຮ້ອຍ (cha_domestic), ລັກສະນະການລົງທຶນທີ່ຜູ້ປະກອບການຖືທຶນຮ່ວມກັນ (cha_co) ແລະ ຂະແໜງການບໍລິການ (bus_survice) ເຊິ່ງປັດໄຈດັ່ງກ່າວແມ່ນບໍ່ຜ່ານລະດັບຄວາມເຊື່ອໝັ້ນທາງສະຖິຕິ 90 ສ່ວນຮ້ອຍ.

## V. ສະຫຼຸບ ແລະ ຂໍ້ສະເໜີແນະ

### 5.1 ສະຫຼຸບ

ຜົນສະຫຼຸບຕີຄວາມໝາຍ ແລະ ຜົນການສຶກສາເຫັນວ່າ: ສະພາບລວມຂອງວິສາຫະກິດທີ່ພະແນກສ່ວຍສາອາກອນຄຸ້ມຄອງມີທ່າອ່ຽງເພີ່ມຂຶ້ນເລື້ອຍໆກວມເອົາ 40.25 ສ່ວນຮ້ອຍ ຈາກປີ 2015 ຫາ 2019, ເຊິ່ງໃນນັ້ນປະກອບມີວິສາຫະກິດທີ່ຖືກລົບລ້າງ/ຢຸດເຊົາ, ວິສະຫະກິດທີ່ສ້າງໃໝ່ ແລະ ຍັງດໍາເນີນສືບຕໍ່ວິສາຫະກິດ. ນອກຈາກນີ້, ແບ່ງຕາມຂະແໜງການ, ຮູບແບບການລົງທຶນ, ການເຂົ້າລະບົບອາກອນມູນຄ່າເພີ່ມ ແລະ ລາຍຮັບທີ່ພະແນກສ່ວຍສາອາກອນຄຸ້ມຄອງ ແລະ ຄຸນລັກສະນະຕ່າງໆຂອງວິສະຫະກິດປະກອບມີ: ເພດຂອງຜູ້ປະກອບການ, ສະຖານທີ່ຕັ້ງຂອງທຸລະກິດ, ອາຍຸໃນການດໍາເນີນທຸລະກິດ, ລັກສະນະການລົງທຶນຂອງທຸລະກິດ, ຂະແໜງການທຸລະກິດ ແລະ ທຶນຈົດທະບຽນຂອງທຸລະກິດ ເຊິ່ງຈໍານວນວິສາຫະກິດຕັ້ງແຕ່ປີ 2015 ຫາ 2019 ຫຼື ວິສາຫະກິດທີ່ລອດ (ມາຮອດປີ 2019) ມີທັງໝົດ 2,280 ຫົວໜ່ວຍ ຫຼື 63.58 ສ່ວນຮ້ອຍ ແລະ ວິສາຫະກິດທີ່ບໍ່ລອດ (ມາຮອດປີ 2019) ມີທັງໝົດ 1306 ຫົວໜ່ວຍ ຫຼື 36.41 ສ່ວນຮ້ອຍ ແລະ ປັດໄຈທີ່ສົ່ງຜົນເຮັດໃຫ້ວິສາຫະກິດໃນນະຄອນຫຼວງວຽງຈັນທີ່ພະແນກສ່ວຍສາອາກອນຄຸ້ມຄອງຢູ່ລອດ ແລະ ບໍ່ລອດນັ້ນ, ມີຕົວປ່ຽນທີ່ຜ່ານການທົດສອບ 3 ຕົວປ່ຽນໄດ້ແກ່: ອາຍຸການດາເນີນທຸລະກິດ, ທຶນຈົດທະບຽນວິສາຫະກິດ ແລະ ຂະແໜງການຄ້າ ແລະ ຕົວປ່ຽນທີ່ບໍ່ຜ່ານການທົດສອບປະກອບມີ 5 ຕົວປ່ຽນຄື: ເພດຂອງຜູ້ປະກອບການ, ສະຖານທີ່ຕັ້ງໃນການດໍາເນີນທຸລະກິດ, ລັກສະນະການລົງທຶນທີ່ຜູ້ປະກອບການຖືທຶນພາຍໃນ 100 ສ່ວນຮ້ອຍ, ລັກສະນະການລົງທຶນທີ່ຜູ້ປະກອບການຖືທຶນຮ່ວມກັນ ແລະ ຂະແໜງການບໍລິການ ເຊິ່ງຕົວປ່ຽນດັ່ງກ່າວແມ່ນບໍ່ຜ່ານລະດັບຄວາມເຊື່ອໝັ້ນທາງສະຖິຕິ 90 ສ່ວນຮ້ອຍ.

### 5.2 ຂໍ້ສະເໜີແນະ

ຜ່ານການສຶກສາອັດຕາການຢູ່ລອດຂອງວິສາຫະກິດທີ່ນະຄອນຫຼວງວຽງຈັນຄຸ້ມຄອງ ໂດຍແມ່ນວິສາຫະກິດທີ່ດຳເນີນທຸລະກິດໃນນະຄອນຫຼວງວຽງຈັນພາຍໃຕ້ການຄຸ້ມຄອງຂອງພະແນກສ່ວຍສາອາກອນ ເຫັນວ່າ: ບັນດາວິສາຫະກິດເປັນສິ່ງສຳຄັນໃນການພັດທະນາ ແລະ ການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ, ເຊິ່ງການດຳເນີນວິສາຫະກິດໃນນະຄອນຫຼວງວຽງຈັນຍັງມີບັນຫາພ້ອມອຸປະສັກຫຼາຍຢ່າງ ແລະ ປັດໄຈໃດທີ່ສາມາດເຮັດໃຫ້ວິສາຫະກິດສາມາດດຳເນີນໄປໄດ້ຢ່າງມີປະສິດທິພາບ. ຈຶ່ງຈຳເປັນຕ້ອງສຶກສາຄົ້ນຄວ້າ ແລະ ທຳຄວາມເຂົ້າໃຈຕໍ່ກັບສະພາບບັນຫາທີ່ເກີດຂຶ້ນ. ທີມງານຜູ້ສຶກສາຈຶ່ງມີຂໍ້ສະເໜີແນະໃນການຄົ້ນຄວ້າຕໍ່ພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:  ສຳຫຼັບພາກສ່ວນລັດຖະບານ ເຫັນວ່າ ການສົ່ງເສີມ ຫຼື ເພີ່ມຂະໜາດຂອງທຸລະກິດສາມາດເຮັດໃຫ້ທຸລະກິດນັ້ນມີໂອກາດຢູ່ລອດຫຼາຍຂຶ້ນ. ດັ່ງນັ້ນ, ລັດຖະບານຄວນສົ່ງເສີມໃຫ້ຜູ້ປະກອບການພາຍໃນຫຼືຕ່າງປະເທດທີ່ມີກ້ອນທຶນຂະໜາດໃຫຍ່ເຂົ້າມາລົງທຶນຫຼາຍຂຶ້ນ ເພື່ອຮັບປະກັນການຢູ່ລອດຂອງວິສະຫະກິດຫຼາຍຂຶ້ນ. ສຳຫຼັບຜູ່ທີ່ສົນໃຈຈະຂຽນກ່ຽວກັບຫົວຂໍ້ນີ້ນັ້ນ ເນື່ອງດ້ວຍຂໍ້ຈຳກັດຂອງຂໍ້ມູນທີ່ກ່າວມາຂ້າງເທິງ, ຖ້າສາມາດໄປຂໍຂໍ້ມູນສະຖິຕິການມອບພັນທະອາກອນຂອງປີທີ່ອັບເດດໃໝ່ລ້າສຸດ ຫຼື ຂໍ້ມູນລາຍໄດ້ຂອງວິສາຫະກິດໃນແຕ່ລະປີຍິ່ງເປັນການດີ ເພາະຈະຊ່ວຍໃຫ້ເຮົາເຫັນສະພາບລວມ ແລະ ເຫດຜົນໄດ້ຢ່າງຊັດເຈນຍິ່ງຂຶ້ນ. ນອກຈາກນີ້, ຜູ່ທີ່ສົນໃຈຍັງສາມາດວິເຄາະການຢູ່ລອດຂອງຂະໜາດຂອງທຸລະກິດອື່ນໆເຊັ່ນ: ທຸລະກິດຂະໜາດນ້ອຍ-ຂະໜາດກາງ ເຮັດໃຫ້ບົດມີຄວາມຫຼາກຫຼາຍ ແລະ ໜ້າສົນໃຈຂຶ້ນຕື່ມ.

## ເອກະສານອ້າງອີງ


ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນປະຈໍາປີ 2015 ແລະ ທິດທາງແຜນການໃນປີ 2016, ເລກທີ 0905/ພສອ.ນວ (ນະຄອນຫຼວງວຽງຈັນ ພະຈິກ ວັນທີ 2, 2016).

ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນປະຈໍາປີ 2015-2016 ແລະ ທິດທາງໃນປີ 2017, ເລກທີ 0905/ພສອ.ນວ (ນະຄອນຫຼວງວຽງຈັນ ຕຸລາ ວັນທີ 28, 2016).

ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນປະຈໍາປີ 2017 ແລະ ທິດທາງແຜນການໃນປີ 2018, ເລກທີ 0192/ສອ.ນວ (ນະຄອນຫຼວງ ມັງກອນ ວັນທີ 15, 2018).

ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນປະຈໍາປີ 2018 ແລະ ທິດທາງແຜນການໃນປີ 2019, ເລກທີ 0264/ສອ.ນວ (ນະຄອນຫຼວງ ມີນາ ວັນທີ 22, 2019).

ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານສ່ວຍສາອາກອນປະຈໍາປີ 2019 ແລະ ທິດທາງແຜນການໃນປີ 2020, ເລກທີ 0495/ສອ.ນວ (ນະຄອນຫຼວງວຽງຈັນ ພຶດສະພາ ວັນທີ 8, 2020).

ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ, ເລກທີ 257/ປປທ (ນະຄອນຫຼວງວຽງຈັນ ກໍລະກົດ ວັນທີ 29, 2019).

ກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ, ເລກ 55/ສພຊ (ນະຄອນຫຼວງວຽງຈັນ ພະຈິກ ວັນທີ 9, 2005).

ບົດແນະນໍາວ່າດ້ວຍການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ, ເລກທີ 3281/ກງ (ນະຄອນຫຼວງວຽງຈັນ ຕຸລາ ວັນທີ 6, 2014).

ທິບດາລາ ວິໄນ. (2015). ສຶກສາປະສິດທິພາບຂອງການຈັດເກັບງົບປະມານນະຄອນຫຼວງວຽງຈັນ (ບົດໂຄງການຈົບຊັ້ນປະລິນຍາຕີ), ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ.

ລັດວ່າດ້ວຍການຈັດແບ່ງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ເລກທີ 25/ລບ (ນະຄອນຫຼວງວຽງຈັນ ມັງກອນ ວັນທີ 16, 2017).

Giovannetti, G., Ricchiuti, G., & Velucchi, M. (2011). Size, innovation and internationalization: a survival analysis of Italian firms. Applied Economics, 43(12), 1511-1520.

Pérez, S. E., Llopis, A. S., & Llopis, J. A. S. (2004). The determinants of survival of Spanish manufacturing firms. Review of Industrial Organization, 25(3), 251-273.

Cao, Y. (2012). A survival analysis of small and medium enterprises (SMEs) in central China and their determinants. African Journal of Business Management, 6(10), 3834-3850.

DEMİRGGİL, H., KARAÖZ, M., GÖVDERE, B., & Muhlis, C. A. N. (2010). Determinants of firm survival in manufacturing industry: a research on lake region in Turkey.

Liu, J., & Pang, D. (2006). Determinants of survival and growth of Listed SMEs in China. The University of Salford, The University of Manchester, UK.

López, D., OFarrill, D., Pérez, J., & Velasquez, B. (2017). Determinants on firm survival in Chile: Evidence from cohort 2010 for the period 2011-2015. Central Bank of Chile, IFC-Bank Indonesia Satellite Seminar on "Big Data" at the ISI Regional Statistics Conference.

Pérez, S. E., Llopis, A. S., & Llopis, J. A. S. (2004). The determinants of survival of Spanish manufacturing firms. Review of Industrial Organization, 25(3), 251-273.

Stirbat, L., Record, R., & Nghardsaysone, K. (2015). The experience of survival: Determinants of export survival in Lao PDR. World Development, 76, 82-94.

pattanieconomy. (2019). ທິດສະດີຄວາມຢູ່ລອດ (Survival) ໃນມິຕິຜູ້ປະກອບການ [Online]. ໄດ້ຈາກ: https://pattanieconomy.wordpress.com

Yothin Sawangdee et al. (2004) Survival Analysis. Journal of Research Methodology, 1(17): 108-123.